ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກໍາ ແລະ ການຄ້າ | ເລກທີ 0221 /ອຄ.ກອຫ
ນະຄອນຫຼວງວຽງຈັນ, ວັນທີ 23 MAR 2021

# ຂໍ້ຕົກລົງ
# ວ່າດ້ວຍ ຊິ້ນສ່ວນຍານພາຫະນະທາງບົກ

- ອີງຕາມ ກົດໝາຍວ່າດ້ວຍອຸດສາຫະກໍາປຸງແຕ່ງ ສະບັບເລກທີ 48/ສພຊ, ລົງວັນທີ 27 ທັນວາ 2013;
- ອີງຕາມ ດໍາລັດວ່າດ້ວຍການຄຸ້ມຄອງທຸລະກິດຍານພາຫະນະທາງບົກ ສະບັບເລກທີ 470/ລບ, ລົງວັນທີ 27 ທັນວາ 2019;
- ອີງຕາມ ດໍາລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງອຸດສາຫະກໍາ ແລະ ການຄ້າ ສະບັບເລກທີ 230/ນຍ, ລົງວັນທີ 24 ກໍລະກົດ 2017;
- ອີງຕາມ ໜັງສືສະເໜີຂອງ ກົມອຸດສາຫະກໍາ ແລະ ຫັດຖະກໍາ ສະບັບເລກທີ 337/ກອຫ.ມຖ, ລົງວັນທີ 04 ມີນາ 2021.

**ລັດຖະມົນຕີ ກະຊວງອຸດສາຫະກໍາ ແລະ ການຄ້າ ອອກຂໍ້ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກໍານົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບ ການຄຸ້ມຄອງ, ຕິດຕາມ ກວດກາ ຊິ້ນສ່ວນຍານພາຫະນະທາງບົກ ທີ່ນໍາມາຜະລິດ ແລະ/ຫຼື ປະກອບຍານພາຫະນະທາງບົກ ຢູ່ໂຮງງານ ເພື່ອເຮັດໃຫ້ການເຄື່ອນໄຫວຂອງໂຮງງານ ຖືກຕ້ອງ ແລະ ສອດຄ່ອງກັບກົດໝາຍ ແລະ ລະບຽບການ ແນໃສ່ ຮັບປະກັນທາງດ້ານເຕັກນິກຄວາມປອດໄພ, ຄຸນນະພາບ ຕາມລະບົບເຕັກນິກການຜະລິດ ແລະ/ຫຼື ປະກອບ ຍານພາຫະນະທາງບົກ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ ຕາມທິດຫັນເປັນ ອຸດສາຫະກໍາ ແລະ ທັນສະໄໝ.

**ມາດຕາ 2 ຊິ້ນສ່ວນຍານພາຫະນະທາງບົກ**

ຊິ້ນສ່ວນຍານພາຫະນະທາງບົກ ແມ່ນ ສ່ວນປະກອບຂອງຍານພາຫະນະທາງບົກ ທີ່ເປັນຊິ້ນສ່ວນດຽວ, ຊິ້ນສ່ວນທີ່ປະກອບສົມບູນ ແລະ ຊິ້ນສ່ວນທີ່ປະກອບຍັງບໍ່ທັນສົມບູນ ທີ່ນໍາໃຊ້ເພື່ອປະກອບເປັນຍານ ພາຫະນະທີ່ສົມບູນ ໂດຍແຍກເປັນແຕ່ລະຮູບແບບຕາມທີ່ໄດ້ກໍານົດໄວ້ໃນມາດຕາ 4 ຂອງຂໍ້ຕົກລົງສະບັບນີ້.

**ມາດຕາ 3 ຂອບເຂດການນໍາໃຊ້**

ຂໍ້ຕົກລົງສະບັບນີ້ ນໍາໃຊ້ສໍາລັບ ບຸກຄົນ, ນິຕິບຸກຄົນ ທັງພາຍໃນ ແລະ ຕ່າງປະເທດ ທີ່ດໍາເນີນທຸລະກິດ ການຜະລິດ ແລະ/ຫຼື ປະກອບຍານພາຫະນະທາງບົກ ຢູ່ ສປປ ລາວ.

## ໝວດທີ 2
## ຮູບແບບຊິ້ນສ່ວນຍານພາຫະນະທາງບົກ

### ມາດຕາ 4 ຮູບແບບຊິ້ນສ່ວນຍານພາຫະນະທາງບົກ

ຮູບແບບຊິ້ນສ່ວນຍານພາຫະນະທາງບົກປະກອບມີ ສາມ ຮູບແບບ ຄື:

1. ເອັສເຄດີ Semi-Knocked Down (SKD);
2. ຊີເຄດີ Completely Knocked Down (CKD);
3. ໄອເຄດີ Incompletely Knocked Down (IKD).

### ມາດຕາ 5 ຊິ້ນສ່ວນໃນຮູບແບບເອັສເຄດີ

ຊິ້ນສ່ວນໃນຮູບແບບ ເອັສເຄດີ ແມ່ນ ຊິ້ນສ່ວນທີ່ບໍ່ແມ່ນຊິ້ນດຽວ ຢູ່ໃນຮູບຮ່າງລັກສະນະທີ່ແກະ ແລະ ແຍກອອກຈາກກັນບໍ່ລະອຽດ ໂດຍປະມານ ຫ້າສິບສ່ວນຮ້ອຍ (50%) ຊຶ່ງເປັນຊິ້ນສ່ວນພໍໃຜພໍມັນ.

### ມາດຕາ 6 ຊິ້ນສ່ວນໃນຮູບແບບຊີເຄດີ

ຊິ້ນສ່ວນໃນຮູບແບບ ຊີເຄດີ ແມ່ນຊິ້ນສ່ວນຢູ່ໃນຮູບຮ່າງລັກສະນະທີ່ແກະ ແລະ ແຍກອອກຈາກກັນລະອຽດ ຊຶ່ງເປັນຊິ້ນສ່ວນພໍໃຜພໍມັນ ຍົກເວັ້ນແຕ່ພາກສ່ວນຈັກ ຫຼື ໝໍ້ໄຟ ທີ່ນໍາເຂົ້າຈາກຕ່າງປະເທດ ເພື່ອປະກອບເປັນຄັນຢູ່ໂຮງງານໃນ ສປປ ລາວ.

### ມາດຕາ 7 ຊິ້ນສ່ວນໃນຮູບແບບໄອເຄດີ

ຊິ້ນສ່ວນໃນຮູບແບບ ໄອເຄດີ ແມ່ນ ຊິ້ນສ່ວນຢູ່ໃນຮູບຮ່າງລັກສະນະທີ່ແກະ ແລະ ແຍກອອກຈາກກັນລະອຽດ ຄືກັນກັບຮູບແບບ ຊີເຄດີ ທີ່ນໍາເຂົ້າ ຈາກຕ່າງປະເທດ ເພື່ອປະກອບຢູ່ໂຮງງານ ແຕ່ຍັງບໍ່ຄົບຊຸດ ຊຶ່ງມີຊິ້ນສ່ວນ ແລະ ອາໄຫຼ່ຈໍານວນໜຶ່ງ ແມ່ນ ໄດ້ຮັບການຜະລິດ ແລະ ດັດແຕ່ງຢູ່ພາຍໃນ ສປປ ລາວ.

ການກໍານົດຊິ້ນສ່ວນໃນຮູບແບບ ໄອເຄດີ ມີດັ່ງນີ້:

1. ຊິ້ນສ່ວນທີ່ສາມາດຜະລິດໄດ້ຢູ່ໂຮງງານ ຕ້ອງມີມູນຄ່າບໍ່ຕໍ່າກວ່າ ຊາວສ່ວນຮ້ອຍ (20%) ຂອງຕົ້ນທຶນການຜະລິດທັງໝົດຂອງຍານພາຫະນະທາງບົກປະເພດດັ່ງກ່າວ;

2. ຊິ້ນສ່ວນທີ່ຊື້ມາຈາກໂຮງງານອື່ນ ທີ່ຜະລິດຢູ່ພາຍໃນ ສປປ ລາວ ເພື່ອນໍາມາປະກອບກັບຊິ້ນສ່ວນທີ່ນໍາເຂົ້າຈາກຕ່າງປະເທດ ເພື່ອປະກອບເປັນຍານພາຫະນະທາງບົກປະເພດທີ່ສົມບູນ ຢູ່ໂຮງງານ ຕ້ອງມີມູນຄ່າບໍ່ຕໍ່າກວ່າ ສາມສິບສ່ວນຮ້ອຍ (30%) ຂອງຕົ້ນທຶນການຜະລິດທັງໝົດຂອງຍານພາຫະນະທາງບົກປະເພດດັ່ງກ່າວ.

### ມາດຕາ 8 ການກໍານົດບັນຊີລາຍການຊິ້ນສ່ວນຍານພາຫະນະທາງບົກ

ການກໍານົດບັນຊີລາຍການຊິ້ນສ່ວນຍານພາຫະນະທາງບົກ ແມ່ນ ກໍານົດຕາມຮູບແບບຊິ້ນສ່ວນ ທີ່ໄດ້ກໍານົດໄວ້ໃນມາດຕາ 4 ຂອງຂໍ້ຕົກລົງສະບັບນີ້ ໂດຍມີ ຫົກ ບັນຊີລາຍການຊິ້ນສ່ວນຍານພາຫະນະທາງບົກ ດັ່ງຕໍ່ດັ່ງນີ້:

1. ບັນຊີລາຍການຊິ້ນສ່ວນ ເອັສເຄດີ ສໍາລັບລົດຈັກຜູ້ຍິງ;
2. ບັນຊີລາຍການຊິ້ນສ່ວນ ເອັສເຄດີ ສໍາລັບລົດຈັກຜູ້ຊາຍ;
3. ບັນຊີລາຍການຊິ້ນສ່ວນ ເອັສເຄດີ ສໍາລັບລົດເບົາ ແລະ ລົດບັນທຸກ;
4. ບັນຊີລາຍການຊິ້ນສ່ວນ ຊີເຄດີ ສໍາລັບລົດຈັກຜູ້ຍິງ;
5. ບັນຊີລາຍການຊິ້ນສ່ວນ ຊີເຄດີ ສໍາລັບລົດຈັກຜູ້ຊາຍ;

6. ບັນຊີລາຍການຊິ້ນສ່ວນ ຊີເຄດີ ສໍາລັບລົດເບົາ ແລະ ລົດບັນທຸກ.

ບັນຊີລາຍການຊິ້ນສ່ວນຍານພາຫະນະທາງບົກ ແມ່ນ ມອບໃຫ້ກົມອຸດສາຫະກໍາ ແລະ ຫັດຖະກໍາ ຄົ້ນຄວ້າ ແລະ ຮັບຮອງເປັນແຕ່ລະໄລຍະ.

## ໝວດທີ 3

## ແຜນການເຄື່ອນໄຫວປະຈໍາປີ ແລະ ຂັ້ນຕອນການນໍາເຂົ້າຊິ້ນສ່ວນຍານພາຫະນະທາງບົກ

### ມາດຕາ 9 ແຜນການເຄື່ອນໄຫວປະຈໍາປີ

ຜູ້ດໍາເນີນກິດຈະການໂຮງງານຜະລິດ ແລະ/ຫຼື ປະກອບຍານພາຫະນະທາງບົກ ຕ້ອງສ້າງແຜນການເຄື່ອນໄຫວປະຈໍາປີຂອງຕົນ ຕາມແບບພິມ ອ ທີ່ ກົມອຸດສາຫະກໍາ ແລະ ຫັດຖະກໍາ ໄດ້ກໍານົດ ແລ້ວນໍາສະເໜີຕໍ່ກົມອຸດສາຫະກໍາ ແລະ ຫັດຖະກໍາ ຫຼື ພະແນກອຸດສາຫະກໍາ ແລະ ການຄ້າແຂວງ, ນະຄອນຫຼວງ ເພື່ອພິຈາລະນາຢັ້ງຢືນຕາມການແບ່ງຂັ້ນຄຸ້ມຄອງ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 20 ແລະ ມາດຕາ 21 ຂອງຂໍ້ຕົກລົງສະບັບນີ້. ການສ້າງແຜນການເຄື່ອນໄຫວປະຈໍາປີ ແມ່ນ ໃຫ້ສໍາເລັດກ່ອນວັນທີ 10 ທັນວາ ຂອງທຸກໆປີ.

### ມາດຕາ 10 ເງື່ອນໄຂຂອງການນໍາເຂົ້າຊິ້ນສ່ວນຍານພາຫະນະທາງບົກ

ການນໍາເຂົ້າຊິ້ນສ່ວນຍານພາຫະນະທາງບົກ ເພື່ອມາຜະລິດ ແລະ/ຫຼື ປະກອບຍານພາຫະນະທາງບົກຢູ່ໂຮງງານ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ນໍາເຂົ້າຊິ້ນສ່ວນຍານພາຫະນະທາງບົກ ຕາມຮູບແບບທີ່ກໍານົດໄວ້ໃນມາດຕາ 4 ຂອງຂໍ້ຕົກລົງສະບັບນີ້;
2. ຕ້ອງມີແຫຼ່ງທີ່ມາຊັດເຈນ;
3. ນໍາເຂົ້າຜ່ານດ່ານສາກົນ;
4. ນໍາເຂົ້າ ໂດຍສອດຄ່ອງກັບແຜນເຄື່ອນໄຫວປະຈໍາປີ.

### ມາດຕາ 11 ຂັ້ນຕອນການນໍາເຂົ້າຊິ້ນສ່ວນຍານພາຫະນະທາງບົກ

ພາຍຫຼັງແຜນການເຄື່ອນໄຫວປະຈໍາປີ ໄດ້ຖືກຢັ້ງຢືນແລ້ວ ການນໍາເຂົ້າຊິ້ນສ່ວນຍານພາຫະນະທາງບົກ ແມ່ນ ໃຫ້ປະຕິບັດ ດັ່ງນີ້:

1. ສະເໜີຫາ ຂະແໜງໂຍທາທິການ ແລະ ຂົນສົ່ງ ເພື່ອຢັ້ງຢືນມາດຕະຖານ ແລະ ຄຸນນະພາບຂອງຊິ້ນສ່ວນຍານພາຫະນະທາງບົກ ທີ່ຈະນໍາເຂົ້າມາປະກອບຢູ່ໂຮງງານ;
2. ສະເໜີຫາ ຂະແໜງການເງິນ ເພື່ອເສຍພາສີ ແລະ ອາກອນ ຕາມລະບຽບການທີ່ກ່ຽວຂ້ອງ.

## ໝວດທີ 4

## ການຢັ້ງຢືນການຜະລິດ ແລະ ການປະກອບຢູ່ໂຮງງານ

### ມາດຕາ 12 ການອອກໃບຢັ້ງຢືນການຜະລິດຊິ້ນສ່ວນ ແລະ/ຫຼື ປະກອບຍານພາຫະນະທາງບົກຢູ່ໂຮງງານ

ການອອກໃບຢັ້ງຢືນ ແມ່ນ ການອອກເອກະສານຢັ້ງຢືນຂະບວນການຜະລິດ ແລະ/ຫຼື ການປະກອບຍານພາຫະນະທາງບົກຢູ່ໂຮງງານ ໂດຍການກໍານົດຮູບແບບ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 4 ຂອງຂໍ້ຕົກລົງສະບັບນີ້.

ມາດຕາ 13 ເງື່ອນໄຂການອອກໃບຢັ້ງຢືນການຜະລິດຊິ້ນສ່ວນ ແລະ/ຫຼື ປະກອບຍານພາຫະນະທາງບົກຢູ່ໂຮງງານ

ການອອກໃບຢັ້ງຢືນການຜະລິດ ແລະ/ຫຼື ປະກອບຍານພາຫະນະທາງບົກ ຢູ່ ສປປ ລາວ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ມີໃບຢັ້ງຢືນດໍາເນີນກິດຈະການໂຮງງານ;
2. ມີແຜນການເຄື່ອນໄຫວປະຈໍາປີ.

ມາດຕາ 14 ການສະເໜີອອກໃບຢັ້ງຢືນການຜະລິດຊິ້ນສ່ວນ ແລະ/ຫຼື ປະກອບຍານພາຫະນະທາງບົກ

ການສະເໜີອອກໃບຢັ້ງຢືນການຜະລິດຊິ້ນສ່ວນ ແລະ/ຫຼື ປະກອບຍານພາຫະນະທາງບົກ ແມ່ນ ໃຫ້ປະກອບເອກະສານ ຍື່ນຕໍ່ ກົມອຸດສາຫະກໍາ ແລະ ຫັດຖະກໍາ ຫຼື ພະແນກອຸດສາຫະກໍາ ແລະ ການຄ້າແຂວງ, ນະຄອນຫຼວງ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 20 ແລະ ມາດຕາ 21 ຂອງຂໍ້ຕົກລົງສະບັບນີ້ ໂດຍມີເອກະສານປະກອບ ດັ່ງນີ້:

1. ໃບສະເໜີຕາມແບບພິມ ທີ່ ກົມອຸດສາຫະກໍາ ແລະ ຫັດຖະກໍາ ໄດ້ກໍານົດ;
2. ສໍາເນົາໃບຢັ້ງຢືນດໍາເນີນກິດຈະການໂຮງງານ;
3. ບັນຊີລາຍການຊິ້ນສ່ວນຍານພາຫະນະທາງບົກທີ່ຜະລິດຢູ່ໂຮງງານ ພ້ອມລາຍລະອຽດຂະບວນການຜະລິດ ໃນກໍລະນີເປັນການຜະລິດຊິ້ນສ່ວນຍານພາຫະນະທາງບົກ;
4. ບັນຊີລາຍການຊິ້ນສ່ວນຍານພາຫະນະທີ່ນໍາມາປະກອບຢູ່ໂຮງງານ ພ້ອມລາຍລະອຽດຂະບວນການປະກອບ ໃນກໍລະນີເປັນການປະກອບຍານພາຫະນະທາງບົກ.

ມາດຕາ 15 ການພິຈາລະນາອອກໃບຢັ້ງຢືນການຜະລິດຊິ້ນສ່ວນ ແລະ/ຫຼື ປະກອບຍານພາຫະນະທາງບົກຢູ່ໂຮງງານ

ພາຍຫຼັງໄດ້ຮັບເອກະສານຖືກຕ້ອງ ແລະ ຄົບຖ້ວນ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 14 ຂອງຂໍ້ຕົກລົງສະບັບນີ້, ກົມອຸດສາຫະກໍາ ແລະ ຫັດຖະກໍາ ຫຼື ພະແນກອຸດສາຫະກໍາ ແລະ ການຄ້າ ແຂວງ, ນະຄອນຫຼວງ ຕ້ອງແຕ່ງຕັ້ງຄະນະກໍາມະການລົງກວດກາ ຕາມເນື້ອໃນການກວດກາທີ່ກໍານົດໄວ້ໃນມາດຕາ 16 ຂອງຂໍ້ຕົກລົງສະບັບນີ້ ເພື່ອກວດກາຄວາມຖືກຕ້ອງຂອງຂະບວນການຜະລິດຊິ້ນສ່ວນ ແລະ/ຫຼື ປະກອບຍານພາຫະນະທາງບົກຢູ່ໂຮງງານ ພາຍໃນ ຫ້າ ວັນ ລັດຖະການ ນັບແຕ່ວັນໄດ້ຮັບເອກະສານເປັນຕົ້ນໄປ. ການລົງກວດກາທຸກຄັ້ງຕ້ອງເຮັດບົດບັນທຶກຮ່ວມກັບເຈົ້າຂອງໂຮງງານ ເພື່ອປະກອບເປັນສໍານວນເອກະສານໃນການພິຈາລະນາອອກໃບຢັ້ງຢືນຂະບວນການຜະລິດ ແລະ/ຫຼື ປະກອບຕາມແຕ່ລະກໍລະນີ.

ໃນກໍລະນີ ເອກະສານບໍ່ຖືກຕ້ອງ ຫຼື ບໍ່ຄົບຖ້ວນ ຕ້ອງແຈ້ງໃຫ້ຜູ້ສະເໜີຊາບໂດຍທັນທີ ເພື່ອປັບປຸງແກ້ໄຂໃຫ້ຖືກຕ້ອງ ແລະ ຄົບຖ້ວນ.

ໃນກໍລະນີ ຂະບວນການຜະລິດຊິ້ນສ່ວນ ແລະ/ຫຼື ປະກອບຍານພາຫະນະທາງບົກ ຖືກຕ້ອງ ແລະ ມີເງື່ອນໄຂຄົບຖ້ວນ, ກົມອຸດສາຫະກໍາ ແລະ ຫັດຖະກໍາ ຫຼື ພະແນກອຸດສາຫະກໍາ ແລະ ການຄ້າ ແຂວງ, ນະຄອນຫຼວງ ຕ້ອງພິຈາລະນາອອກໃບຢັ້ງຢືນການຜະລິດຊິ້ນສ່ວນ ແລະ/ຫຼື ປະກອບຍານພາຫະນະທາງບົກຢູ່ໂຮງງານ ພາຍໃນ ຫ້າ ວັນ ລັດຖະການ ນັບແຕ່ວັນເຮັດບົດບັນທຶກການລົງກວດກາ.

ກໍລະນີ ບໍ່ສາມາດອອກໃບຢັ້ງຢືນໄດ້ ຕ້ອງແຈ້ງເຫດຜົນເປັນລາຍລັກອັກສອນໃຫ້ຜູ້ສະເໜີຊາບ ພາຍໃນ ຫ້າ ວັນ ລັດຖະການ ນັບແຕ່ວັນເຮັດບົດບັນທຶກການລົງກວດກາ.

ມາດຕາ 16 ເນື້ອໃນຂອງການກວດກາຂະບວນການຜະລິດ ແລະ/ຫຼື ປະກອບຍານພາຫະນະທາງບົກ

ການກວດກາຂະບວນການຜະລິດ ແລະ/ຫຼື ປະກອບຍານພາຫະນະທາງບົກຢູ່ໂຮງງານ ແມ່ນ ການກວດກາຂະບວນການ, ເຕັກນິກ ແລະ ລະບົບການຜະລິດຊິ້ນສ່ວນ ແລະ/ຫຼື ປະກອບຍານພາຫະນະທາງບົກ

ຢູ່ສະຖານທີ່ໂຮງງານ ເພື່ອຮັບປະກັນຄວາມຖືກຕ້ອງຕາມຮູບແບບ, ຄຸນລັກສະນະຂອງການຜະລິດ ແລະ/ຫຼື ປະກອບຍານພາຫະນະທາງບົກຢູ່ໂຮງງານ.

**ມາດຕາ 17 ອາຍຸ ແລະ ການຕໍ່ອາຍຸຂອງໃບຢັ້ງຢືນການຜະລິດຊິ້ນສ່ວນ ແລະ/ຫຼື ປະກອບຍານພາຫະນະທາງບົກ**

ໃບຢັ້ງຢືນການຜະລິດຊິ້ນສ່ວນ ແລະ/ຫຼື ປະກອບຍານພາຫະນະທາງບົກ ມີອາຍຸການນຳໃຊ້ ສາມ ປີ ແລະ ສາມາດຕໍ່ໄດ້.

ການສະເໜີຂໍຕໍ່ອາຍຸໃບຢັ້ງຢືນການຜະລິດຊິ້ນສ່ວນ ແລະ/ຫຼື ປະກອບຍານພາຫະນະທາງບົກ ຕ້ອງປະກອບເອກະສານຍື່ນຕໍ່ ກົມອຸດສາຫະກຳ ແລະ ຫັດຖະກຳ ຫຼື ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ກ່ອນໃບຢັ້ງຢືນຈະໝົດອາຍຸການນຳໃຊ້ ສາມສິບ ວັນ ໂດຍມີເອກະສານປະກອບ ດັ່ງນີ້:

1. ໃບສະເໜີ ຕາມແບບພິມທີ່ ກົມອຸດສາຫະກຳ ແລະ ຫັດຖະກຳ ໄດ້ກຳນົດ;
2. ໃບຢັ້ງຢືນການຜະລິດຊິ້ນສ່ວນ ແລະ/ຫຼື ປະກອບຍານພາຫະນະທາງບົກ ສະບັບຕົ້ນ;
3. ສຳເນົາໃບຢັ້ງຢືນດຳເນີນກິດຈະການໂຮງງານ.

ການພິຈາລະນາຕໍ່ອາຍຸຂອງໃບຢັ້ງຢືນການຜະລິດຊິ້ນສ່ວນ ແລະ/ຫຼື ປະກອບຍານພາຫະນະທາງບົກ ແມ່ນ ໃຫ້ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນມາດຕາ 15 ຂອງຂໍ້ຕົກລົງສະບັບນີ້.

**ມາດຕາ 18 ການປ່ຽນແປງການຜະລິດຊິ້ນສ່ວນ ແລະ ປະກອບຍານພາຫະນະທາງບົກ**

ຜູ້ດຳເນີນກິດຈະການໂຮງງານຜະລິດ ແລະ/ຫຼື ປະກອບຍານພາຫະນະທາງບົກ ທີ່ຕ້ອງການປ່ຽນແປງຂະບວນການຜະລິດຊິ້ນສ່ວນ ແລະ/ຫຼື ປະກອບຍານພາຫະນະທາງບົກ ຕ້ອງປະກອບເອກະສານຕາມທີ່ໄດ້ກຳນົດໄວ້ໃນມາດຕາ 14 ຂອງຂໍ້ຕົກລົງສະບັບນີ້ ສະເໜີຕໍ່ ກົມອຸດສາຫະກຳ ແລະ ຫັດຖະກຳ ຫຼື ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ເພື່ອພິຈາລະນາອອກໃບຢັ້ງຢືນການຜະລິດຊິ້ນສ່ວນ ແລະ/ຫຼື ປະກອບຍານພາຫະນະທາງບົກ ຄືນໃໝ່.

ການພິຈາລະນາອອກໃບຢັ້ງຢືນການຜະລິດຊິ້ນສ່ວນ ແລະ/ຫຼື ປະກອບຍານພາຫະນະທາງບົກ ຄືນໃໝ່ ແມ່ນ ໃຫ້ປະຕິບັດຕາມທີ່ໄດ້ກຳກົດໄວ້ໃນມາດຕາ 15 ຂອງຂໍ້ຕົກລົງສະບັບນີ້.

## ໝວດທີ 5
## ການຈັດຕັ້ງປະຕິບັດວຽກງານຄຸ້ມຄອງ ຊິ້ນສ່ວນຍານພາຫະນະທາງບົກ

**ມາດຕາ 19 ການຈັດຕັ້ງປະຕິບັດວຽກງານຄຸ້ມຄອງ ຊິ້ນສ່ວນຍານພາຫະນະທາງບົກ**

ການຈັດຕັ້ງປະຕິບັດວຽກງານຄຸ້ມຄອງຊິ້ນສ່ວນຍານພາຫະນະທາງບົກ ປະກອບມີ ສາມ ຂັ້ນ ຄື:

1. ຂັ້ນສູນກາງ ແມ່ນ ກົມອຸດສາຫະກຳ ແລະ ຫັດຖະກຳ;
2. ຂັ້ນແຂວງ ແມ່ນ ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ;
3. ຂັ້ນເມືອງ ແມ່ນ ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ.

**ມາດຕາ 20 ສິດ ແລະ ໜ້າທີ່ຂອງກົມອຸດສາຫະກຳ ແລະ ຫັດຖະກຳ**

ໃນການຈັດຕັ້ງປະຕິບັດວຽກງານຄຸ້ມຄອງຊິ້ນສ່ວນຍານພາຫະນະທາງບົກ, ກົມອຸດສາຫະກຳ ແລະ ຫັດຖະກຳ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າສ້າງ ແລະ ປັບປຸງນິຕິກຳ, ແຜນການເຄື່ອນໄຫວ ກ່ຽວກັບວຽກງານການຄຸ້ມຄອງ ແລະ ຕິດຕາມການຜະລິດຊິ້ນສ່ວນ ແລະ/ຫຼື ປະກອບຍານພາຫະນະທາງບົກຢູ່ໂຮງງານ ເພື່ອນຳສະເໜີຂັ້ນເທິງພິຈາລະນາ;

2. ໂຄສະນາ, ເຜີຍແຜ່ກົດໝາຍ ແລະ ລະບຽບການ, ໃຫ້ຄຳແນະນຳ ກ່ຽວກັບວຽກງານການນຳເຂົ້າຊິ້ນສ່ວນຍານພາຫະນະທາງບົກ, ການຢັ້ງຢືນແຜນການເຄື່ອນໄຫວປະຈຳປີ, ການອອກໃບຢັ້ງຢືນການຜະລິດຊິ້ນສ່ວນ ແລະ/ຫຼື ປະກອບຍານພາຫະນະທາງບົກ ເພື່ອມາຜະລິດ ແລະ/ຫຼື ປະກອບຢູ່ໂຮງງານ ໃຫ້ພາກສ່ວນທີ່ກ່ຽວຂ້ອງ;

3. ຢັ້ງຢືນແຜນການເຄື່ອນໄຫວປະຈຳປີ ແລະ ອອກໃບຢັ້ງຢືນການຜະລິດຊິ້ນສ່ວນ ແລະ/ຫຼື ປະກອບຍານພາຫະນະທາງບົກ ຂອງໂຮງງານຂະໜາດໃຫຍ່;

4. ຕິດຕາມ, ກວດກາການຈັດຕັ້ງປະຕິບັດວຽກງານການຜະລິດຊິ້ນສ່ວນ ແລະ/ຫຼື ປະກອບຍານພາຫະນະທາງບົກຢູ່ໂຮງງານ ໃນຂອບເຂດທົ່ວປະເທດ;

5. ຄົ້ນຄວ້າ ແລະ ນຳສະເໜີຂັ້ນເທິງພິຈາລະນາມາດຕະການຕໍ່ຜູ້ດຳເນີນກິດຈະການຜະລິດຊິ້ນສ່ວນ ແລະ/ຫຼື ປະກອບຍານພາຫະນະທາງບົກ ເມື່ອເຫັນວ່າມີການກະທຳຜິດຕໍ່ກົດໝາຍ ແລະ ລະບຽບການ;

6. ປະສານສົມທົບກັບພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ, ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ ແລະ ຂະແໜງການກ່ຽວທີ່ຂ້ອງ ເພື່ອກວດກາການຜະລິດຊິ້ນສ່ວນ ແລະ/ຫຼື ປະກອບຍານພາຫະນະທາງບົກຢູ່ໂຮງງານ;

7. ສະຫຼຸບ, ລາຍງານການນຳເຂົ້າຊິ້ນສ່ວນຍານພາຫະນະທາງບົກປະຈຳປີ, ການຜະລິດຊິ້ນສ່ວນ ແລະ/ຫຼື ປະກອບຍານພາຫະນະທາງບົກໃຫ້ຂັ້ນເທິງ ເປັນແຕ່ລະໄລຍະ;

8. ນຳໃຊ້ສິດ ແລະ ປະຕິບັດພັນທະອື່ນ ຕາມການກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 21 ສິດ ແລະ ໜ້າທີ່ຂອງພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ**

ໃນການຈັດຕັ້ງປະຕິບັດວຽກງານຄຸ້ມຄອງຊິ້ນສ່ວນຍານພາຫະນະທາງບົກ, ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ໂຄສະນາ, ເຜີຍແຜ່ກົດໝາຍ ແລະ ລະບຽບການ , ໃຫ້ຄຳແນະນຳ ກ່ຽວກັບວຽກງານການນຳເຂົ້າຊິ້ນສ່ວນຍານພາຫະນະທາງບົກ, ການຢັ້ງຢືນແຜນການເຄື່ອນໄຫວປະຈຳປີ, ການອອກໃບຢັ້ງຢືນການຜະລິດຊິ້ນສ່ວນ ແລະ/ຫຼື ປະກອບຍານພາຫະນະທາງບົກ ເພື່ອມາຜະລິດ ແລະ/ຫຼື ປະກອບຢູ່ໂຮງງານ;

2. ຢັ້ງຢືນແຜນການເຄື່ອນໄຫວປະຈຳປີ ແລະ ອອກໃບຢັ້ງຢືນການຜະລິດຊິ້ນສ່ວນ ແລະ/ຫຼື ປະກອບຍານພາຫະນະທາງບົກ ຂອງໂຮງງານຂະໜາດກາງ ແລະ ຂະໜາດນ້ອຍ;

3. ຕິດຕາມ, ກວດກາການນຳເຂົ້າຊິ້ນສ່ວນຍານພາຫະນະທາງບົກ, ການຢັ້ງຢືນແຜນການເຄື່ອນໄຫວປະຈຳປີ ແລະ ການອອກໃບຢັ້ງຢືນການຜະລິດຊິ້ນສ່ວນ ແລະ/ຫຼື ປະກອບຍານພາຫະນະທາງບົກ ເພື່ອມາຜະລິດ ແລະ/ຫຼື ປະກອບຢູ່ໂຮງງານ ໃນຂອບເຂດແຂວງ, ນະຄອນຫຼວງຂອງຕົນ;

4. ຄົ້ນຄວ້າ ແລະ ນຳສະເໜີຂັ້ນເທິງພິຈາລະນາມາດຕະການຕໍ່ຜູ້ດຳເນີນກິດຈະການຜະລິດຊິ້ນສ່ວນ ແລະ/ຫຼື ປະກອບຍານພາຫະນະທາງບົກ ເມື່ອເຫັນວ່າມີການກະທຳຜິດຕໍ່ກົດໝາຍ ແລະ ລະບຽບການ;

5. ອຳນວຍຄວາມສະດວກ ແລະ ຊຸກຍູ້ໂຮງງານຜະລິດຊິ້ນສ່ວນ ແລະ/ຫຼື ປະກອບຍານພາຫະນະທາງບົກ ໃຫ້ມີການເຄື່ອນໄຫວປົກກະຕິ ແລະ ຖືກຕ້ອງຕາມລະບຽບການທີ່ກ່ຽວຂ້ອງກຳນົດທຸກປະການ;

6. ສະຫຼຸບ, ລາຍງານການຢັ້ງຢືນແຜນການເຄື່ອນໄຫວປະຈຳປີ ແລະ ການອອກໃບຢັ້ງຢືນການຜະລິດຊິ້ນສ່ວນ ແລະ/ຫຼື ປະກອບຍານພາຫະນະທາງບົກ ໃຫ້ກົມອຸດສາຫະກຳ ແລະ ຫັດຖະກຳ ທຸກໆ ຫົກ ເດືອນ ແລະ ໜຶ່ງ ປີ;

7. ນຳໃຊ້ສິດ ແລະ ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 22 ສິດ ແລະ ໜ້າທີ່ຂອງຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ**

ໃນການຈັດຕັ້ງປະຕິບັດວຽກງານຄຸ້ມຄອງຊິ້ນສ່ວນຍານພາຫະນະທາງບົກ, ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ໂຄສະນາເຜີຍແຜ່ກົດໝາຍ ແລະ ລະບຽບການ, ໃຫ້ຄຳແນະນຳ ກ່ຽວກັບວຽກງານການນຳເຂົ້າຊິ້ນສ່ວນຍານພາຫະນະທາງບົກ, ການຢັ້ງຢືນແຜນການເຄື່ອນໄຫວປະຈຳປີ, ການອອກໃບຢັ້ງຢືນການຜະລິດຊິ້ນສ່ວນ ແລະ/ຫຼື ປະກອບຍານພາຫະນະທາງບົກ ເພື່ອມາຜະລິດ ແລະ/ຫຼື ປະກອບຢູ່ໂຮງງານ;

2. ຕິດຕາມການນຳເຂົ້າຊິ້ນສ່ວນຍານພາຫະນະທາງບົກ ເພື່ອມາຜະລິດ ແລະ/ຫຼື ປະກອບຢູ່ໂຮງງານ ໃນຂອບເຂດເມືອງ, ນະຄອນ ຂອງຕົນ;

3. ອຳນວຍຄວາມສະດວກ ແລະ ຊຸກຍູ້ໂຮງງານຜະລິດ ແລະ/ຫຼື ປະກອບຍານພາຫະນະທາງບົກໃຫ້ມີການເຄື່ອນໄຫວປົກກະຕິ ແລະ ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;

4. ຄົ້ນຄວ້າ ແລະ ນຳສະເໜີຂັ້ນເທິງພິຈາລະນາມາດຕະການຕໍ່ຜູ້ດຳເນີນກິດຈະການຜະລິດ ແລະ/ຫຼື ປະກອບຍານພາຫະນະທາງບົກ ເມື່ອເຫັນວ່າມີການກະທຳຜິດຕໍ່ກົດໝາຍ ແລະ ລະບຽບການ;

5. ສະຫຼຸບ, ລາຍງານສະພາບການນຳເຂົ້າຊິ້ນສ່ວນຍານພາຫະນະທາງບົກ ເພື່ອມາຜະລິດ ແລະ/ຫຼື ປະກອບຢູ່ໂຮງງານ ໃນຂອບເຂດເມືອງ, ນະຄອນ ຂອງຕົນ ໃຫ້ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ ທຸກໆ ຫົກ ເດືອນ ແລະ ໜຶ່ງ ປີ;

6. ນຳໃຊ້ສິດ ແລະ ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

## ໝວດທີ 6
## ບົດບັນຍັດສຸດທ້າຍ

**ມາດຕາ 23 ການຈັດຕັ້ງປະຕິບັດ**

ມອບໃຫ້ກົມອຸດສາຫະກຳ ແລະ ຫັດຖະກຳ, ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ແລະ ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ ເປັນເຈົ້າການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເຜີຍແຜ່, ແນະນຳ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ມີປະສິດທິຜົນສູງ.

**ມາດຕາ 24 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດພາຍຫຼັງລົງລາຍເຊັນ ແລະ ພິມລົງໃນຈົດໝາຍເຫດທາງລັດຖະການ ສິບຫ້າ ວັນ.

ຂໍ້ຕົກລົງສະບັບນີ້ ໃຊ້ປ່ຽນແທນ ແຈ້ງການ ສະບັບເລກທີ 062/ອຫ, ລົງວັນທີ 01 ກຸມພາ 1999 ແລະ ແຈ້ງການ ສະບັບເລກທີ 152/ອຫ, ລົງວັນທີ 10 ພຶດສະພາ 1999.

ລັດຖະມົນຕີ

ບ. ເຂັມມະນີ ພົນເສນາ